# 3. ວິທີການເຂົ້າຮັບການເບິ່ງແຍງດູແລ

- ~~ການບໍລິການເດັກຂອງລັດຄາລິຟໍເນຍ (CCS) ແມ່ນໂຄງການຂ ອງລັດທີ່ປິ່ນປົວເດັກທີ່ມີອາຍຸຕ່ຳກວ່າ 21 ປີ ທີ່ມີສະພາວະສຸຂະພາບ, ພະຍາດ ຫຼື ບັນຫາສຸຂະພາບຊໍາເຮື້ ອບາງຢ່າງ ແລະ ຜູ້ທີ່ບັນລຸໄດ້ຕາມກົດລະບຽບຂອງໂຄງການ CCS. ຖ້າທ່ານຕ້ອງການການບໍລິການເບິ່ງແ ຍງດູແລສຸຂະພາບສໍາລັບສະພາວະທາງການແພດທີ່ມີສິດໄດ້ຮັບໂຄງການ CCS ແລະ L.A. Care ບໍ່ມີຜູ້ຊ່ຽວ ຊານຈາກ CCS ຢູ່ໃນເຄືອຂ່າຍທີ່ສາມາດສະໜອງການເບິ່ງແຍງດູແລທີ່ທ່ານຕ້ອງການ, ທ່ານອາດຈະສາມາດໄປຫາຜູ້ໃຫ້ບໍລິການນອກເຄືອຂ່າຍຜູ້ໃຫ້ບໍລິການໄດ້ໂດຍບໍ່ເສຍຄ່າໃຊ້ຈ່າຍ. ເພື່ອສຶກສາເພີ່ມເຕີມກ່ຽວກັບໂຄງການ CCS, ໃຫ້ອ່ານພາກທີ 4 ວ່າດ້ວຍ "ສິດທິປະໂຫຍດ ແລະ ການບໍລິການຕ່າງໆ" ໃນປຶ້ມຄູ່ມືຫຼັ້ມນີ້~~. – (ໜ້າ 34)

---

## ການເບິ່ງແຍງດູແລທີ່ລະອຽດອ່ອນ

### ການບໍລິການທີ່ຜູ້ບໍ່ທັນເຖິງອາຍຸກະສຽນສາມາດໃຫ້ການຍິນຍອມໄດ້

ຖ້າທ່ານມີອາຍຸຕ່ຳກວ່າ 18 ປີ, ທ່ານສາມາດເຂົ້າຮັບບາງການບໍລິການໄດ້ໂດຍບໍ່ມີການອະນຸຍາດຈ າກພໍ່ແມ່ ຫຼື ຜູ້ປົກຄອງ. ການບໍລິການເຫຼົ່ານີ້ເອີ້ນວ່າ: ການບໍລິການທີ່ຜູ້ບໍ່ທັນເຖິງອາຍຸກະສຽນສາ ມາດໃຫ້ການຍິນຍອມໄດ້.

ທ່ານສາມາດເຂົ້າຮັບການບໍລິການຕ່າງໆຕໍ່ໄປນີ້ໄດ້ໂດຍບໍ່ຕ້ອງຂໍການອະນຸຍາດຈາກພໍ່ແມ່ຫຼື ຜູ້ປົກຄອງຂອງທ່ານ:

- **<u>ການບໍລິການສໍາລັບການຂົ່ມຂືນທໍາຈໍາເລົາ ແລະ ການລ່ວງລະເມີດທາງເພດອື່ນໆ</u>**
- ~~ການບໍລິການສໍາລັບການລ່ວງລະເມີດທາງເພດ, ລວມທັງການດູແລສຸຂະພາບຈິດສໍາລັບຄົນເຈັບ ເຂດນອກ~~
- **<u>ການກວດ ແລະ ການໃຫ້ຄໍາປຶກສາ</u>**ກ່ຽວກັບການຖືພາ
- ~~ການວາງແຜນຄອບຄົວ~~
- **<u>ການບໍລິການຄຸມກໍາເນີດເຊັ່ນ:</u>** ການຄຸມກໍາເນີດ **<u>(ຍົກເວັ້ນການເຮັດໝັນ)</u>**
- ການບໍລິການເອົາລູກອອກ

ຖ້າທ່ານມີອາຍຸ 12 ປີຂຶ້ນໄປ, ທ່ານກໍຍັງອາດຈະສາມາດໄດ້ຮັບການບໍລິການເຫຼົ່ານີ້ໄດ້ໂດຍບໍ່ຕ້ອງ ມີການອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງທ່ານ:

- ~~ການດູແລສຸຂະພາບຈິດສໍາລັບຄົນເຈັບເຂດນອກສໍາລັບ:~~
  - ~~ການລ່ວງລະເມີດທາງເພດ~~
  - ~~ການຮ່ວມເພດລະຫວ່າງບຸກຄົນຮ່ວມສາຍເລືອດ~~
  - ~~ການທໍາຮ້າຍຮ່າງກາຍ~~
  - ~~ການລ່ວງລະເມີດເດັກ~~
  - ~~ເມື່ອທ່ານມີຄວາມຄິດທີ່ຈະທໍາຮ້າຍຕົນເອງ ຫຼື ຄົນອື່ນ~~
- ການບໍລິການສຸຂະພາບຈິດສໍາລັບຄົນເຈັບເຂດນອໂດຍອີງໃສ່ລະດັບຄວາມມີວຸດທິພາວະຂອງທ່ານ ແລະ ຄວາມສາມາດໃນການເຂົ້າຮ່ວມໃນການເບິ່ງແຍງດູແລສຸຂະພາບຂອງທ່ານເອງ
- **ການໃຫ້ຄໍາປຶກສາ**, ການປ້ອງກັນ, ການກວດ ແລະ ການປິ່ນປົວ HIV/AIDS
- ການປ້ອງກັນ, ການກວດ ແລະ ການປິ່ນປົວພະຍາດຕິດຕໍ່ທາງເພດສໍາພັນ **ທີ່ອາດຈະປະກອບດ້ວຍພະຍາດຕິດຕໍ່ທາງເພດສໍາພັນຕ່າງໆເຊັ່ນ: ໂລກຊິຟິລິສ໌, ໜອງໃນ, ໂລກຄຣາໄມເດຍ ແລະ ໂລກເຮີມ**
- ການປິ່ນປົວພາວະຜິດປົກກະຕິຈາກການນໍາໃຊ້ສານເສບຕິດ **ສໍາລັບການຕິດຢາ ແລະ ເຫຼົ້າ, ເຊິ່ງປະ ກອບດ້ວຍການບໍລິການກວດກັ່ນຕອງ, ການປະເມີນ, ການແຊກແຊງຊ່ວຍເຫຼືອ ແລະ ການນໍາສົ່ງຕໍ່**
  - ເພື່ອສຶກສາເພີ່ມເຕີມ, ໃຫ້ອ່ານຂໍ້ "ການບໍລິການປິ່ນປົວພາວະຜິດປົກກະຕິຈາກການໃຊ້ສານເສບຕິດ" ໃນພາກທີ 4 ຂອງປຶ້ມຄູ່ມືເຫຼັ້ມນີ້

ສໍາລັບການກວດການຖືພາ, ການບໍລິການວາງແຜນຄອບຄົວ, ການບໍລິການຄຸມກໍາເນີດ ຫຼື ການບໍລິການສໍາລັບການຕິດເຊື້ອພະຍາດຕິດຕໍ່ທາງເພດສໍາພັນ, ທ່ານໝໍ ຫຼື ຄລີນິກບໍ່ຈໍາເປັນຕ້ອງຢູ່ໃນເຄືອຂ່າຍຂອງ Anthem. ທ່ານສາມາດເລືອກຜູ້ໃຫ້ບໍລິການ Medi-Cal ໃດກໍໄດ້ ແລະ ໄປຫາພວກເຂົາສໍາລັບບໍລິການເຫຼົ່າ ນີ້ໄດ້ໂດຍບໍ່ຕ້ອງມີການນໍາສົ່ງຕໍ່ ຫຼື ການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ). **ສໍາລັບຂໍ້ມູນເພີ່ມຕື່ມ ກ່ຽວກັບການບໍລິການວາງແຜນຄອບຄົວ, ກະລຸນາເຂົ້າເບິ່ງ "ການບໍລິການເພື່ອປ້ອງກັນ ແລະ ຄວາມສະຫວັດດີພາບ ແລະ ການຄວບຄຸມພະຍາດຊໍາເຮື້ອ" ໃນພາກທີ 4 ຂອງປຶ້ມຄູ່ມືເຫຼັ້ມນີ້.**

ສໍາລັບການບໍລິການທີ່ຜູ້ບໍ່ທັນເຖິງອາຍຸກະສຽນສາມາດໃຫ້ການຍິນຍອມໄດ້ທີ່ບໍ່ແມ່ນການບໍລິການດ້ານສຸຂະພາບຈິດສໍາລັບ **ຄົນເຈັບເຂດນອກ** ~~ແບບພິເສດ~~, ທ່ານສາມາດໄປຫາຜູ້ໃຫ້ບໍລິການໃນເຄືອຂ່າຍ **ຫຼື ນອກເຄືອຂ່າຍ** ໄດ້ໂດຍບໍ່ຕ້ອງມີການນໍາສົ່ງຕໍ່ ແລະ ໂດຍບໍ່ຕ້ອງມີການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ).
PCP ຂອງທ່ານບໍ່ຈໍາເປັນຕ້ອງນໍາສົ່ງທ່ານຕໍ່ ແລະ ທ່ານບໍ່ຈໍາເປັນຕ້ອງໄດ້ຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ຈາກ Anthem ເພື່ອເຂົ້າຮັບການບໍລິການທີ່ຜູ້ບໍ່ທັນເຖິງອາຍຸກະສຽນສາມາດ ໃຫ້ການຍິນຍອມໄດ້ທີ່ໄດ້ຮັບການຄຸ້ມຄອງ.

ການບໍລິການທີ່ຜູ້ບໍ່ທັນເຖິງອາຍຸກະສຽນສາມາດໃຫ້ການຍິນຍອມໄດ້ທີ່ເປັນການບໍລິການສຸຂະພາບຈິດພິ

ເສດບໍ່ໄດ້ຮັບການຄຸ້ມຄອງ. ການບໍລິການສຸຂະພາບຈິດແບບພິເສດແມ່ນໄດ້ຮັບການຄຸ້ມຄອງໂດຍແຜນປະກັນສຸຂະພາບຈິດປະຈຳຄາວຕີ້ສຳລັບຄາວຕີ້ທີ່ທ່ານອາໄສຢູ່.

ຜູ້ບໍ່ທັນເຖິງອາຍຸກະສຽນສາມາດລົມກັບພະນັກງານຮັບສາຍເປັນການສ່ວນຕົວກ່ຽວກັບຄວາມກັງວົນດ້ານສຸຂະພາ ບຂອງພວກເຂົາໄດ້ໂດຍການໂທຫາ ສາຍຂໍຄຳປຶກສາຈາກພະຍາບານຕະຫຼອດ 24/7: **1-800-224-0336 TTY 711**.

Anthem ຈະບໍ່ສົ່ງຂໍ້ມູນກ່ຽວກັບການເຂົ້າຮັບການບໍລິການທີ່ລະອຽດອ່ອນໄປໃຫ້ພໍ່ແມ່ ຫຼື ຜູ້ປົກຄອງ. ເພື່ອສຶກສາເພີ່ມເຕີມກ່ຽວກັບວິທີຮ້ອງຂໍການຕິດຕໍ່ສື່ສານແບບເປັນຄວາມລັບທີ່ກ່ຽວຂ້ອງກັບການບໍລິການທີ່ລະອຽດອ່ອນ, ໃຫ້ອ່ານ "ແຈ້ງການກ່ຽວກັບແນວທາງການປະຕິບັດດ້ານຄວາມເປັນສ່ວນຕົວ" ໃນພາກທີ 7 ຂອງປຶ້ມຄູ່ມືເຫຼັ້ມນີ້.

# 4. ສິດທິປະໂຫຍດ ແລະ ການບໍລິການຕ່າງໆ

## ສິ່ງທີ່ແຜນປະກັນສຸຂະພາບຂອງທ່ານຄຸ້ມຄອງ

ພາກນີ້ຈະອະທິບາຍການບໍລິການທີ່ໄດ້ຮັບການຄຸ້ມຄອງຂອງທ່ານໃນຖານະເປັນສະມາຊິກຂອງ Anthem. ການບໍລິການທີ່ໄດ້ຮັບການຄຸ້ມຄອງຂອງທ່ານແມ່ນບໍ່ໄດ້ເສຍຄ່າ, ຖ້າການບໍລິການເຫຼົ່ານັ້ນ ມີຄວາມຈໍາເປັນທາງການແພດ ແລະ ສະໜອງໃຫ້ໂດຍຜູ້ໃຫ້ບໍລິການໃນເຄືອຂ່າຍ. ທ່ານຕ້ອງຮ້ອງຂໍ ການອະນຸມັດລ່ວງໜ້າ (ການອະນຸມັດລ່ວງໜ້າ) ຈາກພວກເຮົາ, ຖ້າການເບິ່ງແຍງດູແລຢູ່ນອກເຄືອຂ່າຍ, ຍົກເວັ້ນການບໍລິກ ານທີ່ລະອຽດອ່ອນ ແລະ ການດູແລສຸກເສີນບາງຢ່າງ. ແຜນປະກັນສຸຂະພາບ ຂອງທ່ານອາດຈະຄຸ້ມຄອງການບໍ ລິການທີ່ຈໍາເປັນທາງການແພດຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ, ແຕ່ທ່ານຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ຈາກ Anthem ສໍາລັບເລື່ອງນີ້.

ການບໍລິການທີ່ຈໍາເປັນທາງການແພດ ແມ່ນມີຄວາມສົມເຫດສົມຜົນ ແລະ ມີຄວາມຈໍາເປັນເພື່ອປົກປ້ອງຊີວິດຂອງທ່ານ, ຮັກສາທ່ານຈາກການເປັນພະຍາດຮ້າຍແຮງ ຫຼື ພິການ ຫຼື ຫຼຸດຜ່ອນຄວາມເຈັບປວດຢ່າງຮຸນແຮງຈາກພະຍາດ, ການເຈັບປ່ວຍທີ່ບົ່ງມະຕິ ຫຼື ການບາດເຈັບ. ສໍາລັບບັນດາສະມາຊິກທີ່ມີອາຍຸຕໍ່າກວ່າ 21 ປີ, ການບໍລິການຂອງ Medi-Cal ປະກອບມີການເບິ່ງແຍງດູແລທີ່ຈໍາເປັນທາງການແພດເພື່ອແກ້ໄຂ ຫຼື ຊ່ວຍບັນເທົາການເຈັບປ່ວຍ ຫຼື ສະພາວະທາງຮ່າງກາຍ ຫຼື ຈິດໃຈ. ສໍາລັບລາຍ ລະອຽດເພີ່ມຕື່ ມກ່ຽວກັບບໍລິການທີ່ໄດ້ຮັບການຄຸ້ມຄອງຂອງທ່ານ, ໂທຫາ **1-800-407-4627 (TTY 711)**.

ບັນດາສະມາຊິກທີ່ອາຍຸຕໍ່າກວ່າ 21 ປີແມ່ນຈະໄດ້ຮັບສິດທິປະໂຫຍດ ແລະ ການບໍລິການພິເສດເພີ່ມເຕີມ. ເພື່ອສຶກສາເພີ່ມເຕີມ, ໃຫ້ອ່ານພາກທີ 5 ວ່າດ້ວຍ "ການເບິ່ງແຍງດູແລເພື່ອໃຫ້ເດັກນ້ອຍ ແລະ ຊາວໜຸ່ມມີສຸຂະພາບດີ."

ສິດທິປະໂຫຍດດ້ານສຸຂະພາບພື້ນຖານບາງຢ່າງທີ່ Anthem ສະເໜີໃຫ້ແມ່ນໄດ້ລະບຸໄວ້ຂ້າງລຸ່ມນີ້. ສິດທິປະໂຫຍດທີ່ມີເຄື່ອງໝາຍດາວ (*) ແມ່ນຕ້ອງໄດ້ຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ).

- ການຝັງເຂັມ*
- ການບຳບັດ ແລະ ການບໍລິການສຸຂະພາບຢູ່ເຮືອນ (ການປິ່ນປົວໄລຍະສັ້ນ) ແບບກະທັນຫັນ
- ການສັກຢາປ້ອງກັນພະຍາດ (ສັກຢາ) ສຳລັບຜູ້ໃຫຍ່
- ການກວດ ແລະ ການສັກຢາປ້ອງກັນໂລກພູມແພ້
- ການບໍລິການລົດໂຮງໝໍສຳລັບກໍລະນີສຸກເສີນ
- ການບໍລິການຜູ້ຊ່ຽວຊານການວາງຢາສະລົບ
- ການປ້ອງກັນພະຍາດຫອບຫືດ
- ໂສຕະວິທະຍາ*
- ການປິ່ນປົວສຸຂະພາບພຶດຕິກຳ*
- ~~ການກວດໄບໂອມາກເກີ~~
- ການຟື້ນຟູຫົວໃຈ
- ການບໍລິການນວດຈັດກະດູກ*
- ການບຳບັດດ້ວຍເຄມີ ແລະ ລັງສີ*
- ການປະເມີນສຸຂະພາບດ້ານສະຕິປັນຍາ
- ການບໍລິການພະນັກງານສາທາລະນະສຸກຊຸມຊົນ
- [ສຳລັບ San Mateo ຄາວຕີ້ເທົ່ານັ້ນ] ການບໍລິການດ້ານທັນຕະກຳ (ທີ່ດຳເນີນການປິ່ນປົວໂດຍຜູ້ຊ່ຽວຊານດ້ານທັນຕະກຳ)
- [ສຳລັບໝົດທຸກຄາວຕີ້] ການບໍລິການດ້ານທັນຕະກຳ - ມີຂີດຈຳກັດ (ທີ່ດຳເນີນການປິ່ນປົວໂດຍຜູ້ຊ່ຽວຊານດ້ານທັນຕະກຳ/ແພດປະຈຳ (PCP) ໃນຫ້ອງການແພດ
- ການບໍລິການຟອກໝາກໄຂ່ຫຼັງ/ການຟອກເລືອດ
- ການບໍລິການຜູ້ຊ່ຽວຊານດ້ານການດູແລຄັນ
- ອຸປະກອນການແພດທີ່ທົນທານ (DME)*
- ການບໍລິການດູແລແບບເປັນຄູ່
- ການໄປເຂົ້າຫ້ອງສຸກເສີນ
- ການໃຫ້ໂພຊະນາການຜ່ານທາງເດີນອາຫານ ແລະ ຜ່ານເສັ້ນເລືອດດຳ*
- ການໄປພົບ ແລະ ການຮັບຄຳປຶກສາຈາກຫ້ອງການວາງແຜນຄອບຄົວ (ທ່ານສາມາດໄປຫາຜູ້ໃຫ້ບໍລິການນອກເຄືອຂ່າຍໄດ້)
- ການບໍລິການ ແລະ ອຸປະກອນສຳລັບການຟື້ນຟູ*
- ເຄື່ອງຊ່ວຍຟັງ
- ການເບິ່ງແຍງດູແລສຸຂະພາບຢູ່ເຮືອນ*
- ການດູແລຜູ້ປ່ວຍໄລຍະສຸດທ້າຍ*
- ການດູແລທາງການແພດ ແລະ ການຜ່າຕັດສຳລັບຄົນເຈັບພາຍໃນ*
- ຫ້ອງແລັບ ແລະ ລັງສີວິທະຍາ*
- ການບຳບັດ ແລະ ການບໍລິການອາການທາງສຸຂະພາບຢູ່ເຮືອນໄລຍະຍາວ*
- ການດູແລແມ່ ແລະ ເດັກເກີດໃໝ່
- ການປູກຖ່າຍອະໄວຍະວະສຳຄັນ*
- ກິດຈະກຳບຳບັດ*
- ກາຍອຸປະກອນ/ອະໄວຍະວະທຽມ*
- ອຸປະກອນທະວານທຽມ ແລະ ທາງເດີນປັດສະວະ
- ການບໍລິການໂຮງໝໍສຳລັບຄົນເຈັບເຂດນອກ
- ການບໍລິການສຸຂະພາບຈິດຂອງຄົນເຈັບນອກ
- ການຜ່າຕັດຄົນເຈັບເຂດນອກ*
- ການເບິ່ງແຍງດູແລແບບປະຄັບປະຄອງ*
- ການເຂົ້າພົບ PCP
- ການບໍລິການແພດເດັກ
- ກາຍຍະບຳບັດ*
- ການບໍລິການກ່ຽວກັບຕີນ*
- ການຟື້ນຟູປອດ
- ການກວດເພື່ອຫາລຳດັບຈີໂນມທັງໝົດແບບວ່ອງໄວ

- ການບໍລິການ ແລະ ອຸປະກອນສຳລັບການພັກຟື້ນ*
- ການບໍລິການການພະຍາບານທີ່ມີຄວາມຊຳນິຊຳນານ
- ການພົບຜູ້ຊ່ຽວຊານສະເພາະທາງ
- ວາຈາບຳບັດ*
- ການບໍລິການຜ່າຕັດ
- ການແພດທາງໄກ/ສາທາລະນະສຸກທາງໄກ
- ການບໍລິການແປງເພດ*
- ການດູແລຮີບດ່ວນ
- ການບໍລິການດ້ານສາຍຕາ*
- ການບໍລິການສຸຂະພາບແມ່ຍິງ

# ສິດທິປະໂຫຍດຂອງ Medi-Cal ທີ່ຄຸ້ມຄອງໂດຍ Anthem

## ການດູແລແມ່ ແລະ ເດັກເກີດໃໝ່

Anthem ຄຸ້ມຄອງບໍລິການເບິ່ງແຍງດູແລແມ່ ແລະ ເດັກເກີດໃໝ່ ເຫຼົ່ານີ້:

- ການບໍລິການສູນເກີດລູກ
- ເຄື່ອງປ້ຳນົມ ແລະ ເຄື່ອງໃຊ້
- ການໃຫ້ຄວາມຮູ້ ແລະ ການຊ່ວຍເຫຼືອ ກ່ຽວກັບການລ້ຽງລູກດ້ວຍນົມແມ່
- **ການປະສານການດູແລ**
- ພະຍາບານຜະດຸງຄັນທີ່ມີໃບຮັບຮອງ (CNM)
- **ການໃຫ້ຄຳປຶກສາ**
- ການດູແລຕອນເກີດລູກ ແລະ ຫຼັງເກີດລູກ
- ການບົ່ງມະຕິຄວາມຜິດປົກກະຕິທາງກຳມະພັນຂອງເດັກໃນທ້ອງ ແລະ ການໃຫ້ຄຳປຶກສາ
- ການບໍລິການຜູ້ຊ່ຽວຊານດ້ານການດູແລຄັນ
- ແພດຜະດຸງຄັນທີ່ມີໃບອະນຸຍາດ (LM)
- ການບໍລິການສຸຂະພາບຈິດມານດາ
- ການດູແລເດັກເກີດໃໝ່
- **ການໃຫ້ຄວາມຮູ້ດ້ານໂພຊະນາການ**
- ການໃຫ້ຄວາມຮູ້ດ້ານສຸຂະພາບກ່ຽວກັບການຖືພາ
- ການເບິ່ງແຍງດູແລກ່ອນເກີດລູກ
- **ການປະເມີນສຸຂະພາບຈິດ ແລະ ສັງຄົມ ແລະ ການນຳສົ່ງຕໍ່**
- **ວິຕາມິນ ແລະ ອາຫານເສີມແຮ່ທາດ**

- **ພາກທີ 4 ສິດທິປະໂຫຍດ ແລະ ການບໍລິການຕ່າງໆ:**
- **ສ່ວນ:** ***ການບໍລິການດ້ານທັນຕະກຳ*** **(ໜ້າ 74)**

Medi-Cal ໃຊ້ບັນດາແຜນການດູແລແບບມີການຄຸ້ມຄອງ ເພື່ອໃຫ້ການບໍລິການດ້ານທັນຕະກຳຂອງທ່ານ. ~~ເພື່ອສຶກສາເພີ່ມຕື່ມ, ໃຫ້ໄປທີ່ Health Care Options ທີ່ http://dhcs.ca.goc/mymedi-cal.~~ ທ່ານສາມາດຢູ່ໃນ ທັນຕະກຳແບບເສຍຄ່າຕາມການບໍລິການ ຕໍ່ໄປໄດ້ ຫຼື ທ່ານສາມາດເລືອກ ການເບິ່ງແຍງດູແລແບບມີການຄຸ້ມຄອງສຳລັບທັນຕະກຳ ໄດ້. ເພື່ອເລືອກ ຫຼື ປ່ຽນແ ຜນດ້ານທັນຕະກຳຂອງທ່ານ, ກະລຸນາໂທຫາຫາ Health Care Options ທີ່ເບີ **1-800-430-4263**. ທ່ານອາດຈ ະບໍ່ສາມາດລົງທະບຽນເຂົ້າແຜນ PACE ຫຼື SCAN ແລະ ແຜນ ການເບິ່ງແຍງດູແລແບບມີການຄຸ້ມຄອງສຳລັບທັນຕະກຳ ໄດ້ໃນເວລາດຽວກັນ.

- ~~ການບໍລິການດ້ານທັນຕະກຳຂອງ Medi-Cal ຂອງທ່ານ ແມ່ນສະໜອງໃຫ້ໂດຍ ໂຄງການ Medi-Cal ການເບິ່ງແຍງດູແລແບບມີການຄຸ້ມຄອງສຳລັບທັນຕະກຳ. ສຳລັບຄວາມຊ່ວຍເຫຼືອໃນຊອກຫາທັນຕະແພດ ຫຼື ສຳລັບຄວາມຊ່ວຍເຫຼືອໃນການເຂົ້າຮັບ ການບໍລິການດ້ານທັນຕະກຳ, ທ່ານສາມາດໂທຫາ ໜ່ວຍບໍລິການສະມາຊິກທີ່ເບີ 1-888-839-9909 (TTY 711).~~

- **ສ່ວນ**: ***ການປູກຖ່າຍອະໄວຍະວະສຳລັບເດັກທີ່ມີອາຍຸຕ່ຳກວ່າ 21 ປີ*** **(ໜ້າ 68)**

- ~~L.A. Care ຕ້ອງນຳສົ່ງເດັກທີ່ມີເງື່ອນໄຂໄດ້ຮັບ ການບໍລິການເດັກຂອງລັດຄາລິຟໍເນຍ (CCS) ໄປຍັງສູນການເບິ່ງແຍງດູແລພິເສດ (SCC) ທີ່ໄດ້ຮັບການອະນຸມັດຈາກ CCS ສຳລັບການປະເມີນຜົນພາຍໃນ 72 ຊົ່ວໂມງ ນັບຈາກເວລາທີ່ທ່ານໝໍ ຫຼື ຜູ້ຊ່ຽວຊານຂອງເດັກກຳນົດວ່າເດັກເປັນຜູ້ທີ່ມີທ່າແຮງສຳລັບການປູກຖ່າຍ. ຖ້າ SCC ຢືນຢັນວ່າການປູກຖ່າຍແມ່ນມີຄວາມຈຳເປັນ ແລະ ປອດໄພ, L.A. Care ກໍຈະຄຸ້ມຄອງການປູກຖ່າຍ ແລະ ການບໍລິການທີ່ກ່ຽວຂ້ອງ.~~

- **ສ່ວນ**: ***ຄ່າຂົນສົ່ງ ແລະ ເດີນທາງຕ່າງໆ ສຳລັບ CCS*** **~~(ໜ້າ 69)~~ 84**

  ~~ທ່ານອາດຈະໄດ້ຮັບຄ່າຂົນສົ່ງ, ຄ່າອາຫານ, ຄ່າທີ່ພັກ ແລະ ຄ່າໃຊ້ຈ່າຍອື່ນໆ ເຊັ່ນ: ບ່ອນຈອດລົດ, ຄ່າຜ່ານທາງ ແລະ ອື່ນໆ. ຖ້າທ່ານ ຫຼືຄອບຄົວຂອງທ່ານຕ້ອງການຄວາມຊ່ວຍເຫຼືອເພື່ອໄປຍັງ ການນັດພົບແພດທີ່ກ່ຽວຂ້ອງກັບສະພາວະທີ່ມີສິດໄດ້ຮັບໂຄງການ CCS ແລະ ບໍ່ມີແຫຼ່ງຊັບພະຍາ ກອນອື່ນໃຫ້ແລ້ວ. ທ່ານຄວນໂທຫາ L.A. Care ແລະ ຮ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດ ລ່ວງໜ້າ) ກ່ອນທີ່ທ່ານຈະຈັກຖືງຈ່າຍເອງ ສຳລັບການຂົນສົ່ງ, ອາຫານ ແລະ ທີ່ພັກເຊົາ. L.A. Care ສະໜອງການຂົນສົ່ງທີ່ບໍ່ແມ່ນທາງການແພດ ແລະ ການຂົນສົ່ງທາງການແພດທີ່ບໍ່ແມ່ນເຫດສຸກເສີນ ຕາມທີ່ໄດ້ລະບຸໄວ້ໃນພາກທີ 4, "ສິດທິປະໂຫຍດ ແລະ ການບໍລິການຕ່າງໆ."~~

  ~~ຖ້າເຫັນວ່າຄ່າຂົນສົ່ງ ຫຼື ເດີນທາງຂອງທ່ານມີຄວາມຈຳເປັນ ແລະ L.A. Care ຢັ້ງຢືນວ່າທ່ານໄດ້ພະຍາຍາມຂໍການຂົນສົ່ງຜ່ານ L.A. Care ແລ້ວ, ທ່ານສາມາດໄດ້ຮັບການເບີກເງິນຄືນຈາກ L.A. Care ໄດ້. ພວກເຮົາຕ້ອງເບີກເງິນຄືນໃຫ້ແກ່ທ່ານພາຍໃນ ໖໐ ວັນປະຕິທິນ ນັບຈາກວັນທີ່ທ່ານສົ່ງ ໃບຮັບເງິນ ແລະ ເອກະສານຫຼັກຖານຢັ້ງຢືນຄ່າໃຊ້ຈ່າຍໃນການຂົນສົ່ງທີ່ຕ້ອງການມາໃຫ້.~~

- **ສ່ວນ**: ***ການບໍລິການຕາມບ້ານ ແລະ ຊຸມຊົນ (HCBS) ຢູ່ນອກການບໍລິການຂອງ WCM*** **~~(ໜ້າ 69)~~ 85**

  ~~ຖ້າທ່ານມີເງື່ອນໄຂໃນການລົງທະບຽນຮັບການຍົກເວັ້ນຕາມ 1915(c), ທ່ານອາດຈະສາມາດໄດ້ຮັບການບໍລິການຕາມບ້ານ ແລະ ຊຸມຊົນທີ່ບໍ່ກ່ຽວຂ້ອງກັບສະພາວະທີ່ມີສິດໄດ້ຮັບໂຄງການ CCS ແຕ່ທ່ານຈຳເປັນຕ້ອງໄດ້ຢູ່ໃນສະຖານທີ່ໃນຊຸມຊົນແທນທີ່ຈະເປັນສະຖາບັນໃດໜຶ່ງ. ຕົວຢ່າງ: ຖ້າທ່ານຕ້ອງການການດັດແປງເຮືອນ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງທ່ານ ໃນສະຖານທີ່ໃນຊຸມຊົນ, L.A. Care ຈະບໍ່ສາມາດຈ່າຍຄ່າໃຊ້ຈ່າຍເຫຼົ່ານັ້ນ ໃນນາມເປັນສະພາວະທີ່ກ່ຽວຂ້ອງກັບ CCS ໄດ້. ແຕ່ຖ້າທ່ານໄດ້ຮັບການລົງທະບຽນເຂົ້າໃນການຍົກເວັ້ນຕາມ 1915(c), ການດັດແປງເຮືອນຊານອາດຈະໄດ້ຮັບການຄຸ້ມຄອງ ຖ້າມີຄວາມຈຳ~~

~~ເປັນທາງການແພດ ເພື່ອບໍ່ໃຫ້ໄດ້ເຂົ້າໄປຢູ່ໃນສະຖາບັນ.~~